ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 20 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 08 - 10 .2021

**ຄຳສັ່ງ**

**ວ່າດ້ວຍ ການກວດກາ ແລະ ປະຕິບັດມາດຕະການ**

**ຕໍ່ຜູ້ທີ່ນຳເຂົ້າ ແລະ ນຳໃຊ້ຍານພາຫະນະທຸກປະເພດ ແບບບໍ່ຖືກຕ້ອງ**

ເຖິງ : - ບັນດາທ່ານ ລັດຖະມົນຕີ, ບັນດາທ່ານ ຫົວໜ້າອົງການລັດທຽບເທົ່າກະຊວງ;

- ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ແລະ ບັນດາທ່ານ ເຈົ້າແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບປັບປຸງ ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021;
- ອີງຕາມ ການຕົກລົງເຫັນດີເປັນເອກະພາບກັນ ໃນກອງປະຊຸມນາຍົກ-ຮອງນາຍົກລັດຖະມົນຕີ ຄັ້ງວັນທີ 16-17 ກັນຍາ 2021;
- ອີງຕາມ ການສະເໜີ ຂອງກະຊວງການເງິນ ສະບັບເລກທີ 4606/ກງ, ລົງວັນທີ 20 ກັນຍາ 2021.

ໃນໄລຍະຜ່ານມາ ບັນດາຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໄດ້ຈັດຕັ້ງປະຕິບັດ ກົດໝາຍ ວ່າດ້ວຍພາສີ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງຢ່າງຕັ້ງໜ້າ ເປັນຕົ້ນແມ່ນ ການສະກັດກັ້ນ ແລະ ແກ້ໄຂເດັດຂາດ ຕໍ່ການຄ້າຂາຍເຖື່ອນ ກໍຄືການນຳເຂົ້າ ແລະ ນຳໃຊ້ຍານພາຫະນະແບບບໍ່ຖືກຕ້ອງ ໃນຮູບແບບຕ່າງໆ, ຊ່ວຍໃຫ້ລັດສາມາດເກັບພາສີ-ອາກອນໄດ້ເພີ່ມຂຶ້ນ ແລະ ເຮັດໃຫ້ການນຳເຂົ້າຍານພາຫະນະບໍ່ຖືກຕ້ອງ ຫຼຸດລົງໃນລະດັບໃດໜຶ່ງ. ແຕ່ເຖິງຢ່າງໃດກໍຕາມ, ສະພາບການຄ້າຂາຍເຖື່ອນ, ການຫຼົບຫຼີກພາສີ ຈາກການນຳເຂົ້າຍານພາຫະນະຕ່າງໆ ກໍຍັງມີລັກສະນະແຜ່ຫຼາຍເປັນວົງກວ້າງ ໃນຂອບເຂດທົ່ວປະເທດ.

ເພື່ອແກ້ໄຂປະກົດການຫຍໍ້ທໍ້ ໃນການນຳເຂົ້າ, ການນຳໃຊ້, ແລກປ່ຽນ, ຊື້-ຂາຍ ຍານພາຫະນະ ໃຫ້ຖືກຕ້ອງຕາມກົດໝາຍ ໃນຂອບເຂດທົ່ວປະເທດ ທັງເປັນການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຂອງປະເທດເຮົາ.

**ນາຍົກລັດຖະມົນຕີ ອອກຄຳສັ່ງ:**

1. ໃຫ້ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເອົາໃຈໃສ່ໃນການສະກັດກັ້ນ, ແກ້ໄຂບັນຫາການນຳເຂົ້າຍານພາຫະນະແບບບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ ຂອງການຈັດຕັ້ງ ແລະ ບຸກຄົນ

ໃນຄວາມຮັບຜິດຊອບຂອງບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນຂອງຕົນ ຢ່າງເຂັ້ມງວດ, ຖ້າຢູ່ຂະແໜງການ, ອົງການໃດ ຫາກມີການຈັດຕັ້ງ ແລະ ບຸກຄົນໄດ້ນຳໃຊ້ພາຫະນະເຖື່ອນ ທີ່ຍັງບໍ່ທັນປະຕິບັດພັນທະຕ່າງໆແມ່ນໃຫ້ແນະນຳແກ່ຜູ້ທີ່ຄອບຄອງຍານພາຫະນະດັ່ງກ່າວ ໄປດຳເນີນແກ້ໄຂໃຫ້ຖືກຕ້ອງຕາມກົດໝາຍ ກໍຄືຄຳສັ່ງສະບັບນີ້ ນຳການຈັດຕັ້ງທີ່ກ່ຽວຂ້ອງແຕ່ລະຂັ້ນ.

2. ນິຍາມຄຳສັບທີ່ໃຊ້ໃນຄຳສັ່ງສະບັບນີ້:

- ຍານພາຫະນະນຳເຂົ້າບໍ່ຖືກຕ້ອງ ໝາຍເຖິງ ຍານພາຫະນະທີ່ນຳເຂົ້າ, ຫຼົບຫຼີກ ຫຼື ໜີພາສີ ທີ່ບໍ່ມີໜັງສືອະນຸຍາດນຳເຂົ້າ ແລະ ບໍ່ໄດ້ປະຕິບັດພັນທະເສຍພາສີ-ອາກອນໃຫ້ລັດ ແລ້ວນຳໄປແລກປ່ຽນ, ຊື້-ຂາຍ, ນຳໃຊ້ເອກະສານປອມ ແລະ ຕິດປ້າຍທະບຽນປອມ.
- ຍານພາຫະນະທີ່ນຳໃຊ້ບໍ່ຖືກເປົ້າໝາຍ ໝາຍເຖິງ ຍານພາຫະນະທີ່ໄດ້ຮັບສິດນຳເຂົ້າຕາມນະໂຍບາຍສົ່ງເສີມການລົງທຶນ ຍົກເວັ້ນພາສີ-ອາກອນ ຫຼື ເສຍພາສີ-ອາກອນ 1%, ນຳເຂົ້າຊົ່ວຄາວ, ທີ່ມີການຊື້-ຂາຍ, ແລກປ່ຽນ, ໂອນສິດນຳໃຊ້ທີ່ບໍ່ຖືກຕ້ອງຕາມເປົ້າໝາຍ ແລະ ຍັງບໍ່ທັນໄດ້ເສຍພາສີ-ອາກອນ.
- ຍານພາຫະນະນຳເຂົ້າບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ ແມ່ນບໍ່ລວມເອົາຍານພາຫະນະທີ່ເປັນຄະດີທາງພາສີ, ຄະດີທາງແພ່ງ ແລະ ຄະດີທາງອາຍາ.

3. ໃຫ້ຜູ້ຄອບຄອງຍານພາຫະນະປະເພດຕ່າງໆ ທີ່ໄດ້ນຳເຂົ້າ ແລະ ນຳໃຊ້ບໍ່ຖືກຕ້ອງ ຊຶ່ງມີການຊື້-ຂາຍ, ການນຳໃຊ້ທະບຽນ, ປ້າຍຍານພາຫະນະທີ່ຍັງບໍ່ທັນໄດ້ເສຍພາສີ-ອາກອນ ຫຼື ສິ່ງໃສວ່າ ການທີ່ໄດ້ມາມີໄວ້ໃນການຄອບຄອງຍານພາຫະນະແບບບໍ່ຖືກຕ້ອງ ແມ່ນໃຫ້ຕື່ນຕົວ, ສະໝັກໃຈ ແລະ ຈິງໃຈນຳເອົາເອກະສານ, ຍານພາຫະນະ ມາແຈ້ງຕໍ່ຄະນະກຳມະການຊ່ວຍວຽກຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອດຳເນີນການແກ້ໄຂຕາມກົດໝາຍ ນັບແຕ່ວັນທີ 20 ຕຸລາ 2021 ຫາ ວັນທີ 20 ມັງກອນ 2022 ໃນໄລຍະກຳນົດເວລາດັ່ງກ່າວ ຫາກມາແຈ້ງ ແມ່ນຈະໄດ້ພິຈາລະນາໃຫ້ເສຍພາສີ-ອາກອນ ຕາມລະບຽບການທົ່ວໄປ ແລະ ຈະບໍ່ຖືກປັບໃໝ.

4. ຖ້າຜູ້ຄອບຄອງ ຍານພາຫະນະປະເພດຕ່າງໆ ທີ່ນຳເຂົ້າ ແລະ ນຳໃຊ້ບໍ່ຖືກຕ້ອງ ຫາກບໍ່ນຳເອົາເອກະສານ ແລະ ຍານພາຫະນະຕົວຈິງ ມາແຈ້ງຕໍ່ຄະນະກຳມະການຈັດຕັ້ງປະຕິບັດຊ່ວຍວຽກຂັ້ນສູນກາງ ແລະ ທ້ອງຖິ່ນ ຕາມກຳນົດເວ ລາທີ່ກ່າວມາໃນຂໍ້ 03 ຂ້າງເທິງນີ້, ຈະຖືກດຳເນີນຕາມຂັ້ນຕອນຂອງກົດໝາຍ.

   ສຳລັບ ຍານພາຫະນະທີ່ມີຢູ່ໃນການຄອບຄອງແບບບໍ່ຖືກຕ້ອງ ຫາກເຈົ້າໜ້າທີ່ຂອງລັດທີ່ກ່ຽວຂ້ອງກວດກາພົບເຫັນຈະຖືກຍຶດ ເປັນຊັບສິນຂອງລັດ ຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງ ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020, ສ່ວນຜູ້ທີ່ຄອບຄອງຍານພາຫະນະ ຍັງຈະຖືກດຳເນີນຄະດີຕາມກົດໝາຍ ວ່າດ້ວຍພາສີສະບັບດັ່ງກ່າວ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຫຼື ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ.

5. ມອບໃຫ້ ກະຊວງການເງິນ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ ຜັນຂະຫຍາຍຄຳສັ່ງສະບັບນີ້ ເປັນຄຳແນະນຳໃຫ້ທຸກພາກສ່ວນລວມທັງການຈັດຕັ້ງ ແລະ ບຸກຄົນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ ຕາມພາລະບົດບາດຂອງຂະແໜງການຕົນ.

6. ມອບໃຫ້ ກະຊວງການເງິນ ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງຂະແໜງການຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ແຕ່ງຕັ້ງຄະນະກຳມະການຊີ້ນຳລວມ, ຄະນະກຳມະການຊ່ວຍວຽກ ເພື່ອດຳເນີນການກວດກາແກ້ໄຂຍານພາຫະນະທີ່ນຳເຂົ້າບໍ່ຖືກຕ້ອງ ແລະ ນຳໃຊ້ບໍ່ຖືກເປົ້າໝາຍ ຂອງຂັ້ນສູນກາງ ແລະ ທ້ອງຖິ່ນຕາມຄວາມເໝາະສົມ.

7. ມອບໃຫ້ ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທຸກຂັ້ນ ເປັນເຈົ້າການຈັດຕັ້ງເຜີຍແຜ່ຄຳສັ່ງສະບັບນີ້ ຕາມໜ້າທີ່, ຂອບເຂດສິດ ຂອງໃຜລາວຢ່າງທົ່ວເຖິງ ແລະ ຊີ້ນຳໃນການຈັດຕັ້ງປະຕິບັດໃຫ້ຖືກຕ້ອງ ແລະ ເຂັ້ມງວດ.

8. ງົບປະມານທີ່ຮັບໃຊ້ເຂົ້າໃນການເຄື່ອນໄຫວດຳເນີນການແກ້ໄຂການນຳເຂົ້າ ແລະ ນຳໃຊ້ຍານພາຫະນະບໍ່ຖືກຕ້ອງ ເປັນຕົ້ນ ຄ່າບໍລິການໂຄສະນາຜ່ານສື່, ຄ່າບໍລິການແຫຼ່ງຂ່າວ, ຄ່າປົກປັກຮັກສາ, ຄ່າພິສູດຫຼັກຖານດ້ານນິຕິວິທະຍາ ແລະ ຄ່າໃຊ້ຈ່າຍອື່ນໆ ທີ່ເກີດຂຶ້ນແມ່ນໃຫ້ກະຊວງການເງິນ ຄົ້ນຄວ້າຮັບຜິດຊອບຕາມກົດໝາຍ ແລະ ລະບຽບການ.

9. ໃນໄລຍະຈັດຕັ້ງປະຕິບັດ ຄຳສັ່ງສະບັບນີ້ ຫາກມີຂໍ້ຫຍຸ້ງຍາກ ໃຫ້ລາຍງານຄືນຕໍ່ທ່ານ ນາຍົກລັດຖະມົນຕີ ໂດຍຜ່ານກະຊວງການເງິນ ຫຼື ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເພື່ອມີທິດຊີ້ນຳໃນການແກ້ໄຂແຕ່ລະໄລຍະ.

10. ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການ ແລະ ນິຕິກຳຕ່າງໆ ທີ່ກ່ຽວຂ້ອງ ທີ່ໄດ້ອອກໄລຍະຜ່ານມາ ຊຶ່ງມີເນື້ອໃນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກລົບລ້າງ, ຄຳສັ່ງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ພັນຄຳ ວິພາວັນ